ເລື່ອງສັ້ນ

# ເພື່ອສິ້ນຄວັນທາງຍາກ



ແຕ່ງໂດຍ: ມະນີວອນ

ແຕ້ມໂດຍ: ພ ແພງໄຊ

2006

PDF created with pdfFactory Pro trial version www.pdffactory.com



ແດດອ່ອນໃນຍາມເຊົ້າຊ່ວຍໃຫ້ອາກາດທີ່ໜາວເຢັນຄ່ອຍໆ ມີຄວາມອົບອຸ່ນຂຶ້ນແຕ່ປານນັ້ນກໍຍັງເຮັດບໍ່ເຮັດໃຫ້ຈິດຕະກອນໄດ້ຮັບຄວາມອົບອຸ່ນລາວນອນຂົດຢູ່ໃນຜ້າຫົ່ມເກົ່າຜືນບາງໆ ແລະມຸ້ງສີດຳທີ່ບໍ່ໄດ້ຊັກມາເປັນເວລາດົນແລ້ວ.



PDF created with pdfFactory Pro trial version www.pdffactory.com



ປະຕູຫ້ອງນອນຂອງຈິດຕະກອນເປີດອອກພ້ອມທັງມີສຽງຈົ່ມດ່າຂອງແມ່ດັງເຂົ້າມາພ້ອມວ່າ:"ປານນີ້ກໍຍັງບໍ່ລຸກ! ນອນກິນບ້ານກິນເມືອງ ພໍ່ກໍຊົ່ວ ລູກກໍຂີ້ຄ້ານ !" ຈາກນັ້ນສຽງປະຕູກໍດັງປ່າງ !! ຈິດຕະກອນເອົາມືອັດຫູປິ່ນຫລັງໃສ່ສຽງທີ່ຄຸ້ນເຄີຍນັ້ນທັນທີ.



PDF created with pdfFactory Pro trial version www.pdffactory.com



ພໍ່ກັບແມ່ຜິດຖຽງມີປາກມີສຽງກັນຕັ້ງແຕ່ຈິດຕະກອນຮູ້ ຄວາມຈົນດຽວນີ້ຈິດຕະກອນອາຍຸໄດ້ 16 ປີແລ້ວແມ່ກໍຮ້າຍດ່າ ວ່າພໍ່ຫລິ້ນສາວເອົາເມຍນ້ອຍ, ພໍ່ກໍຈົ່ມຮ້າຍວ່າແມ່ເອົາແຕ່ຫລິ້ນ ໄພ້ບໍ່ສົນໃຈນໍາລູກນໍາຜົວຫລາຍຕໍ່ ຫລາຍເທື່ອຈິດຕະກອນຕ້ອງ ໜຶ້ງເຂົ້າແຕ່ງກິນ ແລະ ກິນເຂົ້າຜູ້ດຽວ.



PDF created with pdfFactory Pro trial version www.pdffactory.com



ມື້ໜຶ່ງເມື່ອໝູ່ມາຊັກຊວນໃຫ້ທົດລອງເສບຢາບ້າໂດຍໝູ່ຂອງຈິດຕະກອນບອກວ່າ: "ຖ້າໂຕໄດ້ທົດລອງແລ້ວໂຕຊິຕິດໃຈ ຖ້າໂຕເສບຢານີ້ແລ້ວໂຕຊິພົ້ນຈາກຄວາມທຸກໂຕຢາກໄດ້ຫຍັງກໍຈະໄດ້ຕາມໃຈ" ເມື່ອເປັນດັ່ງນັ້ນຈິດຕະກອນຈຶ່ງທົດລອງເສບຢາບ້ານຳໝູ່ເມື່ອເສບຫລາຍຄັ້ງຫລາຍຄາວຈິດຕະກອນກໍກາຍເປັນຄົນຕິດຢາມີຮ່າງກາຍຈ່ອຍເຫລືອງ, ໜ້າຕາໝົ່ນໝອງບໍ່ມີຄວາມຫວັງຫຍັງທັງໝົດ.



PDF created with pdfFactory Pro trial version www.pdffactory.com



ຈິດຕະກອນຂາດໂຮງຮຽນຫລາຍຄັ້ງຕິດຕໍ່ກັນຜົນການຮຽນກໍ່ຕົກຕໍ່າອາຈານຈຶ່ງໄດ້ສົ່ງບັດເຊີນມາເຖິງຜູ້ປົກຄອງ. ເມື່ອແມ່ຈິດຕະກອນອ່ານກໍ່ຮ້າຍດ່າຂຶ້ນວ່າ: " ບັກລູກຊື່ອ!!!ແນວມັນມັກຊິ່ວກໍ່ຊ່າງຫົວມັນຫາງໂຮງຮຽນຊິເຮັດແນວໃດກໍ່ສຸດແລ້ວ "



PDF created with pdfFactory Pro trial version www.pdffactory.com




ຈາກນັ້ນບໍ່ດົນຈິດຕະກອນກໍໄດ້ຮັບແຈ້ງການໃຫ້ອອກຈາກ
ໂຮງຮຽນເພາະລາວບໍ່ສາມາດປະຕິບັດຕາມລະບຽບຂອງໂຮງຮຽນ
ຈິດຕະກອນເສຍໃຈຫລາຍຈຶ່ງຫັນໜ້າມາເສບຢາບ້າຫລາຍຂຶ້ນ
ກວ່າເກົ່າ.



PDF created with pdfFactory Pro trial version www.pdffactory.com



ມື້ໜຶ່ງຈິດຕະກອນຍ່າງໄປຕາມທາງດ້ວຍຄວາມຊືມເສົ້າ ລາວຕັ້ງໃຈວ່າຈະໄປຊື້ຢາບ້າມາເສບແຕ່ລາວບໍ່ມີເງິນຈັກກີບຍ້ອນຄວາມຫິວຢາແຮງລາວຈຶ່ງເກີດມີອາການເຈັບທ້ອງ ເຈັບຫົວປວດຮາກ ແລະ ປະກອບກັບຄວາມອ່ອນເພຍຂອງຮ່າງກາຍຈິດຕະກອນຈຶ່ງລົ້ມລົງ ແລະ ຊັກຢູ່ແຄມທາງພຽງຜູ້ດຽວ.



PDF created with pdfFactory Pro trial version www.pdffactory.com



ໃນຂະນະນັ້ນສົມດີ ແລະ ຄຳປ້ອງເພື່ອນທີ່ເຄີຍເຂົ້າໂຮງຮຽນນຳກັນຜ່ານກາຍມາພໍດີ ພວກເຂົາຈຶ່ງພາຈິດຕະກອນກັບບ້ານ ເມື່ອອາການຂອງຈິດຕະກອນດີຂຶ້ນສົມດີຈຶ່ງເວົ້າຂຶ້ນວ່າ: " ຈິດຕະກອນເປັນຫຍັງໂຕຈຶ່ງເປັນແນວນີ້! ແຕ່ກ່ອນຄືວ່າໂຕເປັນຄົນແຂງແຮງ, ຮຽນໜັງສືກໍເກັ່ງ! ເປັນຫຍັງໂຕຈຶ່ງອອກຈາກໂຮງຮຽນ ! " ຈິດຕະກອນບອກວ່າ: "ທີ່ພວກໂຕເວົ້າມາກໍຖືກ! ແຕ່ຍ້ອນເຮົາມີບັນຫາຢູ່ໃນຄອບຄົວພໍ່ກັບແມ່ເຮົາເພິ່ນຜິດຖຽງກັນຕະຫລອດເພິ່ນບໍ່ເຄີຍເອົາໃຈໃສ່ເຮົາເລີຍເຮົາຄຽດໃສ່ເພິ່ນເຮົາຈຶ່ງເສບຢາບ້າແລ້ວເຮົາກໍເປັນແນວນີ້ແຫລະ ".



PDF created with pdfFactory Pro trial version www.pdffactory.com



ຄືນມື້ນັ້ນຈິຕະກອນນອນເອົາມືກ່າຍໜ້າຜາກໃນໃຈຄຶ້ນຄິດເຖິງອະດີດທີ່ເຄີຍມີໝູ່ຄູ່ເຂົ້າໂຮງຮຽນນຳກັນດຽວນີ້ ພວກເຂົາໄດ້ຂຶ້ນຫ້ອງໝົດແລ້ວ ແລະ ພວກເຂົາເຈົ້າກຳລັງຈະໄປຮຽນຕໍ່ ທີ່ມະຫາວິທະຍາໄລ ແຕ່ຈິດຕະກອນເອງພັດບໍ່ໄດ້ຮຽນບໍ່ມີອະນາຄົດ.



PDF created with pdfFactory Pro trial version www.pdffactory.com



ປະຕູຫ້ອງນອນຂອງຈິດຕະກອນເປີດອອກຄ່ອຍໆພໍ່ກັບແມ່ຍ່າງເຂົ້າມານັ່ງຢູ່ຂອບຕຽງພໍ່ເອົາມືລູບຫົວ, ແມ່ກໍ່ນັ່ງກອດຈິດຕະກອນ ແລະ ເວົ້າວ່າ : " ຜ່ານມາຍ້ອນພໍ່ແມ່ບໍ່ໄດ້ເອົາໃຈໃສ່ຕໍ່ລູກຈຶ່ງເຮັດໃຫ້ລູກເປັນແນວນີ້ຕໍ່ຈາກນີ້ໄປພໍ່ກັບແມ່ຈະປ່ຽນແປງນິໄສຈະບໍ່ເຮັດຄືເກົ່າເພື່ອເຮັດໃຫ້ຄອບຄົວເຮົາມີຄວາມສຸກ".



PDF created with pdfFactory Pro trial version www.pdffactory.com




ຈາກນັ້ນມາຈິດຕະກອນກໍມີກຳລັງໃຈອັນໃຫຍ່ຫລວງຈາກພໍ່ແມ່ ແລະໝູ່ເພື່ອນຈິດຕະກອນຕັດສິນໃຈເຊົາຢາບ້າດ້ວຍຕົນເອງ ລາວໄດ້ເຂົ້າຮ່ວມໂຄງການຕໍ່ຕ້ານຢາເສບຕິດ ແລະ ຊ່ວຍໂຄສະນາໃຫ້ເຍົາວະຊົນຊາວໜຸ່ມຮູ້ເຖິງຜົນຮ້າຍຂອງຢາເສບຕິດ ຈິດຕະກອນໄດ້ກັບໄປເຂົ້າ ໂຮງຮຽນອີກຄັ້ງໜຶ່ງໃນສາຍວິຊາຊີບ.

ມື້ນີ້ແມ່ນມື້ສຳຄັນທີ່ສຸດຂອງຈິດຕະກອນເພາະລາວໄດ້ຮັບໃບປະກາດສະນີຍະບັດຈາກຈາກໂຮງຮຽນວິຊາຊີບສາຂາສ້ອມແປງຈິດຕະກອນຖ່າຍຮູບຮ່ວມກັບພໍ່ແມ່ ແລະ ໝູ່ເພື່ອນໂດຍສະເພາະແມ່ນສົມດີ ແລະ ຄຳປ້ອງດ້ວຍຄວາມພາກພູມໃຈ.



PDF created with pdfFactory Pro trial version www.pdffactory.com